# ຄູ່ມືຄູ

# ໄພພິບັດສຶກສາຊັ້ນມັດທະຍົມຕອນຕົ້ນ

## ສອດແຊກໃນວິຊາວິທະຍາສາດທຳມະຊາດ

## ແລະ ວິທະຍາສາດສັງຄົມ



ກະຊວງສຶກສາທິການ

ວຽງຈັນ, 2009

# ຄູ່ມືຄູ

# ໄພພິບັດສຶກສາຊັ້ນມັດທະຍົມຕອນຕົ້ນ

## ສອດແຊກໃນວິຊາວິທະຍາສາດທຳມະຊາດ
## ແລະ ວິທະຍາສາດສັງຄົມ



ກະຊວງສຶກສາທິການ

ວຽງຈັນ, 2009

# ຄູ່ມືຄູ
# ໄພພິບັດສຶກສາຊັ້ນມັດທະຍົມຕອນຕົ້ນ

## ສອດແຊກໃນວິຊາວິທະຍາສາດທຳມະຊາດ
## ແລະ ວິທະຍາສາດສັງຄົມ


ຮຽບຮຽງໂດຍ: **ທ່ານ ພອນຈັນ ຄຳບຸນພັນ**
ທ່ານ ດຣ.ນ. ແກ້ວວິວອນ ອຸດທະຈັກ
ທ່ານ ຄຳຈັນ ລັດຖະຍອດ
ທ່ານ ທອງດຳ ທອງສິນ
ທ່ານ ນ. ແຫວນເພັດ ສີສຸລາດ
ທ່ານ ນ. ທອງມີ ດວນສັກດາ
ທ່ານ ສີມຸງຄຸນ ວົງຈຳປາ
ທ່ານ ເພັດສະຫວ່າງ ພະຈິນໄພ

ກວດແກ້ໂດຍ: **ທ່ານ ນ. ພວງຄຳ ສິມສະນິດ**
ທ່ານ ທອງແກ້ວ ອາສາ
ທ່ານ ແອໂຈ້ ອາດຜາສຸກ
ທ່ານ ດຣ. ມີທອງ ສຸວັນມີໄຊ
ທ່ານ ຄຳເພົ້າ ໂຮມບັນຍາ

ປະກອບຄຳເຫັນໂດຍ: ທ່ານ ນ. ວິໄລຄຳ ລາດສະອາດ



ຈັດພິມໂດຍ: ອົງການ ADPC
ຕາມທະບຽນພິມ: 431-435 ພຈ 18122009
ພິມທີ່: ໂຮງພິມ ເອກະພາບ
ຂະໜາດ: A4
ຈຳນວນ: 500 ຫົວ
ພິມຄັ້ງທີ: 1

ກະຊວງສຶກສາທິການ

ວຽງຈັນ, 2009

# ຄຳນຳ

ປຶ້ມຄູ່ມືຄູຫົວນີ້ ຮຽບຮຽງຂຶ້ນ ຈຸດປະສົງ ເພື່ອຊ່ວຍໃຫ້ຄູຮູ້ວິທີການນຳໃຊ້ປຶ້ມແບບຮຽນຫຼຸດຜ່ອນໄພພິບັດ ສຳລັບຊັ້ນມັດທະຍົມຕອນຕົ້ນ ທີ່ຄະນະຜູ້ຮຽບຮຽງຂອງທີມງານສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ກະຊວງສຶກສາທິການຮຽບຮຽງຂຶ້ນໃນ ປີ 2007 ໂດຍການສະໜັບ ສະໜູນທຶນຈາກອົງການຊ່ວຍເຫຼືອມະນຸດສະທຳເອີລົບ.

ເນື່ອງຈາກວ່າ ບົດຮຽນເລື່ອງ ການຫຼຸດຜ່ອນໄພພິບັດ ບໍ່ມີຫຼັກສູດສະເພາະຄືກັບວິຊາຕ່າງໆໃນຫຼັກສູດສາມັນສຶກສາ ດ້ວຍເຫດນັ້ນ ການຮຽນ - ການສອນເລື່ອງການຫຼຸດຜ່ອນຄວາມສ່ຽງໄພພິບັດ ຕ້ອງໄດ້ສອນແຊກເຂົ້າກັບເລື່ອງທີ່ກ່ຽວຂ້ອງຕ່າງໆ ທີ່ລະບຸໄວ້ໃນຫຼັກສູດ. ດັ່ງນັ້ນ, ກ່ອນຈະສອນຄູຕ້ອງໄດ້ຄົ້ນຄວ້າເນື້ອໃນປຶ້ມໃຫ້ເຂົ້າໃຈຢ່າງເລິກເຊິ່ງ ວ່າແຕ່ລະເລື່ອງກ່ຽວພັນກັບຫົວຂໍ້ໃດໃນ ບົດຮຽນບົດໃດຂອງວິຊາໃດ ແລະ ຈະສອນແຊກເຂົ້າແນວໃດຈຶ່ງຈະໄດ້ຜົນດີ. ຈາກນັ້ນ ໃຫ້ຄົ້ນຄິດຫາ ກິດຈະກຳການຮຽນ-ການສອນ ແລະ ນຳໃຊ້ວິທີສິດສອນທີ່ເນັ້ນນັກຮຽນເປັນສູນກາງຂອງການຮຽນຮູ້ (ເນັ້ນໃຫ້ນັກຮຽນໄດ້ຄົ້ນຄິດ, ໄດ້ປະຕິບັດ ແລະ ແກ້ບັນຫາດ້ວຍນັກຮຽນເອງ ) ແລະ ນຳໃຊ້ເຕັກນິກການສິດ ສອນທີ່ແທດເໝາະກັບນັກຮຽນຂອງຕົນ ໃນນັ້ນໃຫ້ເນັ້ນຂະບວນການຮຽນຮູ້ ໂດຍນັກຮຽນເອງເປັນ ຕົ້ນຕໍດ້ວຍການນຳເອົາເຫດການຈິງທີ່ເກີດຂຶ້ນຢູ່ໃນທ້ອງຖິ່ນ ແລະ ກ່ຽວຂ້ອງກັບບົດຮຽນມາໃຫ້ ນັກຮຽນຄົ້ນຄິດຫາສາເຫດ ແລະ ວິທີແກ້ບັນຫາ.

ຄູ່ມືຄູແນະນຳການສອນການຫຼຸດຜ່ອນໄພພິບັດ ທີ່ທີມງານໄດ້ຮຽບຮຽງຂຶ້ນນີ້ ພຽງແຕ່ເປັນພື້ນຖານ, ບໍ່ໃຫ້ຄູຜູ້ຊົມໃຊ້ຖືວ່າເປັນວິທີທີ່ສົມບູນແບບ. ດັ່ງນັ້ນ, ຄູຜູ້ສອນຕົວຈິງສາມາດນຳໃຊ້ວິທີ ແລະ ເຕັກນິກການ ສອນທີ່ຕົນເອງໄດ້ຈາກປະສົບການ ທີ່ເຫັນວ່າຈະໄດ້ຜົນດີກວ່າ ແລະ ແທດເໝາະກັບນັກຮຽນຂອງ ຕົນກວ່າ ເພື່ອເຮັດໃຫ້ການຮຽນ - ການສອນປະສົບຜົນສຳເລັດສູງສຸດ.

ໃນການນຳໃຊ້ປຶ້ມຄູ່ມືຄູຫົວນີ້, ຖ້າຄູອາຈານທ່ານໃດຫາກເຫັນຂໍ້ບົກພ່ອງປະການໃດ ກະລຸນາສົ່ງ ຄຳຄິດຄຳເຫັນໄປໃຫ້ທີມງານຮຽບຮຽງຂອງສະຖາບັນຄົ້ນຄວ້າ ວິທະຍາສາດ ການສຶກສາດ້ວຍ; ພວກເຮົາມີຄວາມຍິນດີຮັບເອົາເພື່ອເປັນຂໍ້ມູນສຳລັບການປັບປຸງໃຫ້ດີຂຶ້ນໃນຂັ້ນຕໍ່ໄປ.

**ຂໍຂອບໃຈ**

# ສາລະບານ

ໜ້າ

ບົດທີ 1. ຄວາມໝາຍຂອງໄພພິບັດ........................................................................ 1
ບົດທີ 2. ດິນເຈື່ອນ.................................................................................................. 3
ບົດທີ 3. ແຜ່ນດິນໄຫວ............................................................................................ 7
ບົດທີ 4. ໄພນ້ຳຖ້ວມ.............................................................................................. 9
ບົດທີ 5. ໄພແຫ້ງແລ້ງ............................................................................................. 13
ບົດທີ 6. ອັກຄີໄພ..................................................................................................... 15
ບົດທີ 7. ບັນຫາມົນລະພິດ......................................................................................... 17
ບົດທີ 8. ອຸບັດເຫດທີ່ເກີດຂຶ້ນຕາມຫ້ອງທະດົນ..................................................... 20
ບົດທີ 9. ຄວາມວຸ້ນວາຍໃນສັງຄົມ........................................................................... 22

# ບົດທີ 1 ຄວາມໝາຍຂອງໄພພິບັດ

**ເວລາສອນ : 1 ຊົ່ວໂມງ**

**ບ່ອນສອນສອດແຊກ:** ກ່ອນສອນບົດທີ 8 ໃນວິຊາ ວິທະຍາສາດທຳມະຊາດ

## I. ຈຸດປະສົງ

ເພື່ອໃຫ້ຜູ້ຮຽນສາມາດ:

- ບອກຄວາມໝາຍຂອງໄພພິບັດ.
- ອະທິບາຍ ສາເຫດ, ຜົນກະທົບຂອງໄພພິບັດ.
- ບອກວິທີການເພື່ອຫຼຸດຜ່ອນຄວາມເສຍຫາຍຈາກໄພພິບັດ

## II. ເນື້ອໃນຕົ້ນຕໍ

- ຄວາມຮູ້ ແລະ ຜົນກະທົບຂອງໄພພິບັດ.
- ສາເຫດທີ່ພາໃຫ້ເກີດໄພພິບັດ.
- ວິທີການປ້ອງກັນ ຫຼື ຫຼຸດຜ່ອນຜົນກະທົບຈາກໄພພິບັດ.
- ການຫ້າງຫາກະກຽມ, ການຕອບໂຕ້ ແລະ ການກໍ່ສ້າງ ແລະ ປົວແປງຄືນໃໝ່

## III. ສື່ການຮຽນ - ການສອນ

- ຮູບກ່ຽວກັບຄວາມເສຍຫາຍຈາກໄພພິບັດຕ່າງໆ.
- ຕົວຢ່າງເຫດການກ່ຽວກັບໄພພິບັດ ທີ່ເກີດຂຶ້ນໃນທ້ອງຖິ່ນ ( ຖ້າມີ ).

## IV. ກິດຈະກຳການຮຽນ - ການສອນ

### 1. ສົນທະນາລວມກ່ຽວກັບຄວາມຮູ້ໄພພິບັດ ແລະ ຜົນກະທົບຂອງມັນ

- ຄູສົນທະນາກັບນັກຮຽນໂດຍໃຊ້ຄຳຖາມນຳດັ່ງນີ້:
  + ມີໃຜໄດ້ຮູ້ຂ່າວເຫດການຕ່າງໆເຊັ່ນ: ນ້ຳຖ້ວມ, ໄຟໄໝ້, ແຜ່ນດິນໄຫວ... ທີ່ເກີດຂຶ້ນໃນທ້ອງຖິ່ນ, ປະເທດ ຫຼື ຕ່າງປະເທດ ? ( ຖ້າມີຜູ້ຮູ້ ຄູໃຫ້ຜູ້ນັ້ນເລົ່າໃຫ້ໝູ່ຟັງ. ຖ້າບໍ່ມີນັກຮຽນຜູ້ໃດຮູ້ ໃຫ້ຄູຍົກເອົາບາງເຫດການມາເລົ່າໃຫ້ນັກຮຽນຟັງ ).
  + ຄວາມເສຍຫາຍຈາກແຕ່ລະເຫດການເປັນແນວໃດ?
  + ມີໃຜເຄີຍໄດ້ຍິນຄຳວ່າໄພພິບັດ ? ຄວາມໝາຍຂອງພິບັດແມ່ນແນວໃດ ?

**ຄູ ແລະ ນັກຮຽນພ້ອມກັນສະຫຼຸບ : ໄພພິບັດ ແມ່ນເຫດການທີ່ຮ້າຍແຮງໃດໜຶ່ງທີເກີດຂຶ້ນ ແລະ ສິ່ງຜົນ ກະ ທົບຕໍ່ຊຸມຊົນ ຫຼື ສັງຄົມໃດໜຶ່ງ ເປັນສາເຫດ ພາໃຫ້ມີການສູນເສຍ/ເສຍຫາຍ ຕໍ່ມະນຸດ, ຊັບສິນ,ເສດຖະກິດ ແລະ ສິ່ງແວດລ້ອມ ເກີນກັບຄວາມສາມາດຂອງຊຸມຊົນທີ່ຈະແກ້ໄຂດ້ວຍຕົນເອງ.**

+ ໄພພິບັດມີຈັກປະເພດ ? ແຕ່ລະປະເພດມີໄພພິບັດກ່ຽວກັບຫຍັງແດ່ ?
+ ຜົນກະທົບຂອງໄພພິບັດເປັນແນວໃດ ?

- ນັກຮຽນສຶກສາ ຕົວຢ່າງໄພພິບັດໃນແບບຮຽນເພີ່ມ.
- ຄູ ຮ່ວມກັບນັກຮຽນສະຫຼຸບຄວາມໝາຍ, ປະເພດ ແລະ ຜົນກະທົບຂອງໄພພິບັດ.

## 2. ຄົ້ນຄວ້າລວມເຖິງສາເຫດທີ່ພາໃຫ້ເກີດຄວາມເສຍຫາຍຈາກໄພພິບັດຕ່າງໆ

- ຄູສົນທະນາກັບນັກຮຽນ ໂດຍໃຊ້ຄຳຖາມ:
  + ຖ້າທຸກຄົນມີຄວາມຮູ້ ແລະ ເຂົ້າໃຈໃນແຕ່ລະໄພພິບັດ ຄວາມເສຍຫາຍທີ່ເກີດຂຶ້ນຈະເປັນແນວໃດ? **ຕອບ : ຄວາມເສຍຫາຍຈະມີໜ້ອຍ ຫຼື ບໍ່ມີເລີຍ ເພາະເຮົາສາມາດປ້ອງກັນ ແລະ ເຮັດໃຫ້ຊີວິດການເປັນຢູ່ກັບເຂົ້າສູ່ສະພາບປົກກະຕິໂດຍໄວ**
  + ຖ້າມີການວາງແຜນຮັບມືກັບໄພພິບັດໄວ້ກ່ອນ ຄວາມເສຍຫາຍຈະເປັນແນວໃດ ?
  + ສາເຫດທີ່ພາໃຫ້ເກີດຄວາມເສຍຫາຍຈາກໄພພິບັດແມ່ນຫຍັງ ?
- ຄູນຳພານັກຮຽນສະຫຼຸບ ສາເຫດທີ່ພາໃຫ້ເກີດຄວາມເສຍຫາຍຈາກໄພພິບັດຕ່າງໆ ໂດຍສັງລວມ : ຍ້ອນຊຸມຊົນ ຫຼື ທີ່ຕັ້ງ ມີຄວາມຕ້ານທານຕ່ຳ (ມີເງື່ອນໄຂບໍ່ປອດໄພຈາກໄພທຳມະຊາດ ) ເຊິ່ງຄວາມຕ້ານທານຕ່ຳປະກອບມີ :

- ບໍ່ມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບໄພພິບັດ
- ຄວາມປະໝາດ ( ຮູ້ແຕ່ບໍ່ໃສ່ໃຈ )
- ບໍ່ມີການວາງແຜນປ້ອງກັນໄວ້ກ່ອນ
- ບໍ່ມີສະຖານທີ່ ອົບພະຍົບໄປບ່ອນປອດໄພ
- ສະຖານທີ່ບໍ່ໝັ້ນຄົງ, ເຮືອນ ແລະ ທົ່ງນາຕັ້ງຢູ່ບ່ອນຕ່ຳ
- ການດຳລົງຊີວິດບໍ່ໝັ້ນຄົງ ແລະ ລາຍຮັບຕ່ຳ
- ບໍ່ມີເຄື່ອງມືທຳການຜະລິດ

## 3. ຄົ້ນຄວ້າກຸ່ມກ່ຽວກັບການປ້ອງກັນ ຫຼື ຫຼຸດຜ່ອນຄວາມເສຍຫາຍ

- ນັກຮຽນ ສົນທະນາເປັນກຸ່ມຕາມຄຳຖາມ:
  + ຈະສາມາດປ້ອງກັນ ຫຼື ຫຼຸດຜ່ອນຄວາມເສຍຫາຍຈາກໄພພິບັດໄດ້ ຫຼື ບໍ່ ? ເຮັດແນວໃດ?

- ຜູ້ຕາງໜ້າແຕ່ລະກຸ່ມລາຍງານ.

ຄູນຳພານັກຮຽນສະຫຼຸບ: ເຖິງວິທີການປ້ອງກັນ ຫຼື ຫຼຸດຜ່ອນຄວາມເສຍຫາຍ ຈາກໄພພິບັດຕ່າງໆ ໂດຍເນັ້ນເຖິງ :

- ການຫ້າງຫາກະກຽມ ( ໄລຍະກ່ອນການເກີດໄພພິບັດ)
- ການຕອບໂຕ້ ( ລະຫວ່າງການເກີດໄພພິບັດ )
- ການຟື້ນຟູ ແລະ ປົວແປງຄືນໃໝ່ ( ໄລຍະຫຼັງໄພພິບັດ )

## V. ການວັດ ແລະ ປະເມີນຜົນ

ປະເມີນຄວາມຮູ້, ຄວາມເຂົ້າໃຈ ແລະ ຄວາມສາມາດຂອງນັກຮຽນຈາກ:

- ການອອກຄຳເຫັນໃນເວລາສົນທະນາໃນກຸ່ມ ແລະ ສົນທະນາກັບຄູ.
- ການເລົ່າເຫດການທີ່ເກີດຂຶ້ນໃນທ້ອງຖິ່ນ ຫຼື ໃນປະເທດທີ່ນັກຮຽນຮູ້ຈັກ.

# ບົດທີ 2 ດິນເຈື່ອນ

ເວລາສອນ : 1 ຊົ່ວໂມງ

ບ່ອນສອນສອດແຊກ: ບົດທີ 10 ຂໍ້ 10. 4. 2. ງ ວິທະຍາສາດທຳມະຊາດ ມ.1.

## I. ຈຸດປະສົງ

ເພື່ອໃຫ້ຜູ້ຮຽນສາມາດ:

- ບອກ ສາເຫດ ແລະ ຜົນກະທົບຂອງດິນເຈື່ອນ.
- ອະທິບາຍ ວິທີຫຼຸດຜ່ອນຜົນເສຍຫາຍຈາກການເຈື່ອນຂອງດິນ
- ບອກ ວິທີປ້ອງກັນດິນເຈື່ອນ.
- ບອກສິ່ງທີ່ນັກຮຽນສາມາດປະຕິບັດການປ້ອງກັນດິນເຈື່ອນໄດ້.

## II. ເນື້ອໃນຕົ້ນຕໍ

- ຄວາມໝາຍຂອງດິນເຈື່ອນ.
- ສາເຫດທີ່ເຮັດໃຫ້ດິນເຈື່ອນ.
- ຜົນກະທົບຈາກດິນເຈື່ອນ
- ການປ້ອງກັນອັນຕະລາຍຈາກດິນເຈື່ອນ ຕໍ່ ບ້ານເຮືອນ.
- ການປ້ອງກັນພື້ນທີ່ສ່ຽງຕໍ່ດິນເຈື່ອນ.
- ການຄົ້ນຫາ ແລະ ຊ່ວຍເຫຼືອຜູ້ເຄາະຮ້າຍຈາກດິນເຈື່ອນ.

## III. ສື່ການຮຽນ - ການສອນ

- ຮູບ ຫຼື ໂປສເຕີ ກ່ຽວກັບດິນເຈື່ອນ.
- ຂໍ້ມູນກ່ຽວກັບດິນເຈື່ອນ ແລະ ຜົນເສຍຫາຍຂອງມັນ.
- ບົວຫົດນ້ຳ, ຄຸ, ຊວ້ານ.
- ດິນ ປະມານ 4 ຄຸ.
- ຫີນ ຂະໜາດຕ່າງກັນ ( ຫີນແຮ່ຖົງໃຫຍ່ເທົ່າໄຂ່ໄກ່ ) ປະມານ 2 ຄຸ.
- ນ້ຳ.
- CD ກ່ຽວກັບໄພດິນເຈື່ອນ

## IV. ກິດຈະກຳການຮຽນ - ການສອນ

### ກິດຈະກຳ 1: ສົນທະນາກ່ຽວກັບດິນເຈື່ອນ

- ຄູສົນທະນາກັບນັກຮຽນ ໂດຍໃຊ້ຄຳຖາມນຳເຊັ່ນ:
  + ນັກຮຽນເຄີຍເຫັນດິນເຈື່ອນບໍ່ ?
  + ດິນເຈື່ອນເກີດຂຶ້ນຍາມໃດ ?
  + ລັກສະນະຂອງພື້ນທີ່ທີ່ເກີດການເຈື່ອນຂອງດິນເປັນແນວໃດ ?
  + ດິນເຈື່ອນເປັນອັນຕະລາຍແນວໃດ ?
- ຄູຮ່ວມກັບນັກຮຽນຮ່ວມກັນ ສະຫຼຸບກ່ຽວກັບ ຜົນເສຍຫາຍເກີດຈາກການເຈື່ອນຂອງດິນ.

### ກິດຈະກຳ 2: ທົດລອງກ່ຽວກັບການເຈື່ອນຂອງດິນ

- ຄູນຳພານັກຮຽນເຮັດການທົດລອງດັ່ງນີ້:
  + ເອົາຫີນປົນໃສ່ດິນ ແລ້ວແບ່ງເຄິ່ງ ແຕ່ລະເຄິ່ງເຮັດເປັນກອງໜຶ່ງ ແລະ ແຕ່ລະກອງສູງຕ່າງກັນ ( ໜ້າຊັນຕ່າງກັນ ), ໜ້າຂອງແຕ່ລະກອງເຮັດໃຫ້ມີ ຮ່ອງ, ບ່ອນໜູບ, ບ່ອນສວດ. ຈາກນັ້ນ ໃຊ້ບົວຫົດນ້ຳຄ່ອຍຫົດນ້ຳໃສ່ແຕ່ລະກອງຢ່າງສະໝ່ຳສະເໝີໃນປະລິມານເທົ່າກັນ ແລະ ລັກສະນະການຫົດນ້ຳໃສ່ແຕ່ລະກອງໃຫ້ໃກ້ຄຽງກັນທີ່ສຸດ (ປະລິມານນ້ຳອອກຈາກບົວເທົ່າ ກັນ ແລະ ຖອກຢູ່ລະດັບສູງດຽວກັນ). ປຽບທຽບການເຈື່ອນໄຫຼຂອງດິນຢູ່ໜ້າແຕ່ລະກອງ.
  + ເຮັດການທົດລອງຄືເກົ່າ ແຕ່ເຮັດເປັນກອງດິນ 2 ກອງ ຄືກັນ ໃນນັ້ນກອງໜຶ່ງໃຫ້ເອົາເຟືອງມຸ່ນ ຫຼື ຫຍ້ານ້ອຍ ປູກໃສ່ຕື້ນໆ ແລະ ປົກທົ່ວໜ້າຂອງມັນ. ປຽບການເຈື່ອນໄຫຼຂອງດິນຢູ່ໜ້າແຕ່ລະກອງ.
- ຄູສົນທະນາກັບນັກຮຽນເຖິງສາເຫດຂອງການເຈື່ອນຂອງດິນໂດຍນຳໃຊ້ຄຳຖາມ:
  + ຜ່ານການທົດລອງນັກຮຽນມີຄວາມເຂົ້າໃຈແນວໃດ ?
  + ສາເຫດທີ່ເຮັດໃຫ້ດິນເຈື່ອນມີຫຍັງແດ່ ?
  + ມະນຸດເຮົາເຮັດຫຍັງແດ່ທີ່ເປັນສາເຫດຂອງດິນເຈື່ອນ ?
  + ເຮືອນຕັ້ງຢູ່ພື້ນທີ່ແນວໃດ ສ່ຽງຕໍ່ອັນຕະລາຍຈາກດິນເຈື່ອນ ?
- ຄູນຳພານັກຮຽນສະຫຼຸບກ່ຽວກັບສາເຫດ ການເຈື່ອນຂອງດິນໂດຍທົ່ວໄປ ແລະ ສາເຫດທີ່ບ້ານເຮືອນ ໄດ້ຮັບອັນຕະລາຍຈາກດິນເຈື່ອນ.

**ກິດຈະກຳ 3: ສົນທະນາກ່ຽວກັບການປ້ອງກັນອັນຕະລາຍຈາກດິນເຈື່ອນ.**

- ແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ ແລ້ວໃຫ້ແຕ່ລະກຸ່ມຄົ້ນຄວ້າຕາມຄຳຖາມດັ່ງນີ້:
  + ເຮັດແນວໃດ ຈຶ່ງຈະປ້ອງກັນບໍ່ໃຫ້ເຮືອນຖືກຖະຫຼົ່ມ ຫຼື ໄຫຼໄປກັບດິນເຈື່ອນ ?
  + ເຮັດແນວໃດ ຈຶ່ງຈະປ້ອງກັນການເຈື່ອນຂອງດິນໄດ້?
- ຜູ້ຕາງໜ້ານັກຮຽນແຕ່ລະກຸ່ມລາຍງານ.
- ຄູນຳພານັກຮຽນສະຫຼຸບກ່ຽວກັບວິທີການຕ່າງໆ ເພື່ອປ້ອງກັນດິນເຈື່ອນໂດຍທົ່ວໄປ ແລະ ປ້ອງກັນບໍ່ໃຫ້ເຮືອນຖືກຖະຫຼົ່ມ ຫຼື ໄຫຼໄປກັບດິນເຈື່ອນ.
- ຄູຖາມນັກຮຽນປະມານ 3-5 ຄົນ ກ່ຽວກັບຜົນກະທົບຈາກດິນເຈື່ອນໂດຍໃຊ້ຄຳຖາມ:
  + ດິນເຈື່ອນນຳເອົາຄວາມເສຍຫາຍແນວໃດມາສູ່ຊີວິດ ແລະ ຊັບສິນຂອງມະນຸດ ?
- ຄູນຳພານັກຮຽນສະຫຼຸບກ່ຽວກັບຜົນກະທົບຈາກດິນເຈື່ອນ.

**ກິດຈະກຳ 4: ຖາມຕອບກ່ຽວກັບການຄົ້ນຫາ ແລະ ຊ່ວຍເຫຼືອຜູ້ເຄາະຮ້າຍ ຈາກດິນເຈື່ອນ**

- ຄູຖາມນັກຮຽນປະມານ 3-5 ຄົນ ເຖິງວິທີການຄົ້ນຫາ ແລະ ຊ່ວຍເຫຼືອຜູ້ເຄາະຮ້າຍຈາກດິນເຈື່ອນ ໂດຍໃຊ້ຄຳຖາມ:
  + ເພື່ອຄົ້ນຫາ ແລະ ຊ່ວຍເຫຼືອຜູ້ເຄາະຮ້າຍຈາກດິນເຈື່ອນ ຄວນກະກຽມແນວໃດ ?
  + ຄວນຄົ້ນຫາ ແລະ ຊ່ວຍເຫຼືອ ຜູ້ເຄາະຮ້າຍ ແນວໃດ ຈຶ່ງປອດໄພ ?
    ( ຄຳຕອບແຕ່ລະຄົນຄູບັນທຶກໃສ່ກະດານເອົາໄວ້ )
- ຄູນຳພານັກຮຽນວິເຄາະຄຳຕອບຂອງແຕ່ລະຄົນ.
- ຄູນຳພານັກຮຽນສະຫຼຸບເຖິງວິທີການຄົ້ນຫາ ແລະ ຊ່ວຍເຫຼືອຜູ້ເຄາະຮ້າຍຈາກດິນເຈື່ອນ.

## V. ການວັດ ແລະ ປະເມີນຜົນ

ປະເມີນຄວາມຮູ້, ຄວາມເຂົ້າໃຈ ແລະ ຄວາມສາມາດຂອງນັກຮຽນດ້ວຍການສັງເກດຈາກ:

- ການອອກຄຳເຫັນໃນເວລາສົນທະນາໃນກຸ່ມ ແລະ ສົນທະນາກັບຄູ.
- ຄວາມຫ້າວຫັນໃນການປະກອບສ່ວນປະຕິບັດການທົດລອງ.

# ບົດທີ 3 ແຜ່ນດິນໄຫວ

ເວລາສອນ: 1 ຊົ່ວໂມງ

**ບ່ອນສອນສອດແຊກ:** ບົດທີ 10.4.2 ຂ ວິທະຍາສາດທຳມະຊາດຊັ້ນ ມ1
ບົດທີ 10.ຂໍ້ 3 ວິທະຍາສາດສັງຄົມຊັ້ນ ມ1
ບົດທີ 11.ຂໍ້ 3 ແບບຮຽນພູມສາດຊັ້ນ ມ1

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ບອກຄວາມໝາຍຂອງແຜ່ນດິນໄຫວ
- ບອກສາເຫດທີ່ພາໃຫ້ເກີດແຜ່ນດິນໄຫວ
- ອະທິບາຍຜົນກະທົບຈາກໄພແຜ່ນດິນໄຫວ
- ບອກວິທີປ້ອງກັນ ແລະ ຫຼຸດຜ່ອນຜົນເສຍຫາຍຈາກເຫດການແຜ່ນດິນໄຫວ

## II. ເນື້ອໃນຕົ້ນຕໍ

- ຄວາມໝາຍຂອງແຜ່ນດິນໄຫວ
- ສາເຫດທີ່ພາໃຫ້ເກີດແຜ່ນດິນໄຫວ
- ຜົນກະທົບຈາກແຜ່ນດິນໄຫວ
- ວິທີປ້ອງກັນ ແລະ ການຫຼຸດຜ່ອນຜົນເສຍຫາຍຈາກເຫດການແຜ່ນດິນໄຫວ

## III. ສື່ການຮຽນ-ການສອນ

- ຮູບຜົນເສຍຫາຍຈາກແຜ່ນດິນໄຫວ
- ຮູບຈຳລອງສາເຫດທີ່ພາໃຫ້ເກີດແຜ່ນດິນໄຫວ
- ຂໍ້ມູນ ແລະ ເຫດການຈິງຕ່າງໆທີ່ກ່ຽວກັບແຜ່ນດິນໄຫວ

## IV. ກິດຈະກຳການຮຽນ-ການສອນ

### ກິດຈະກຳ 1: ສົນທະນາລວມກ່ຽວກັບເຫດການຂອງແຜ່ນດິນໄຫວ

- ຄູຖາມນັກຮຽນເຖິງເຫດການແຜ່ນດິນໄຫວທີ່ເກີດຂຶ້ນໃນເຂດອາຊີ ຫຼື ເຂດອື່ນໆວ່າ:

+ ໃຜເຄີຍໄດ້ເຫັນ ຫຼື ໄດ້ຍິນກ່ຽວກັບເຫດການແຜ່ນດິນໄຫວແດ່?
+ ແຜ່ນດິນໄຫວນັ້ນເປັນແນວໃດ?
+ ແຜ່ນດິນໄຫວມີຄວາມໝາຍແນວໃດ?
+ ສາເຫດທີ່ພາໃຫ້ເກີດແຜ່ນດິນໄຫວມີຫຍັງແດ່?

- ຄູນຳພານັກຮຽນສະຫຼຸບຕາມຄວາມເປັນຈິງທີ່ນັກຮຽນຮູ້ ແລະ ເຫັນໃນຂ່າວ

**ກິດຈະກຳ 2: ສົນທະນາເປັນກຸ່ມກ່ຽວກັບສາເຫດ ແລະຜົນເສຍຫາຍຂອງແຜ່ນດິນໄຫວ**

- ຄູແບ່ງນັກຮຽນອອກເປັນ 3 ກຸ່ມ ໃຫ້ແຕ່ລະກຸ່ມສົນທະນາຊອກຫາສາເຫດ ແລະ ຜົນກະທົບທີ່ເກີດຂຶ້ນຈາກແຜ່ນດິນໄຫວດັ່ງຄຳຖາມລຸ່ມນີ້:

  ກຸ່ມທີ 1. ສາເຫດທີ່ພາໃຫ້ເກີດແຜ່ນດິນໄຫວມີຫຍັງແດ່?

  ກຸ່ມທີ 2. ຜົນກະທົບຂອງແຜ່ນດິນໄຫວຕໍ່ສິ່ງທີ່ມີຊີວິດມີຫຍັງແດ່?

  ກຸ່ມທີ 3. ຜົນກະທົບຂອງແຜ່ນດິນໄຫວຕໍ່ສິ່ງແວດລ້ອມມີຫຍັງແດ່?

- ໃຫ້ຜູ້ຕາງໜ້າຂອງແຕ່ລະກຸ່ມຂຶ້ນລາຍງານ
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບດັ່ງນີ້
  + ສາເຫດຂອງແຜ່ນດິນໄຫວເກີດມາຈາກການປ່ຽນແປງອຸນຫະພູມຂອງບັນດາແຜ່ນເປືອກໂລກແລະການລະເບີດຂອງພູໄຟ (ລະອຽດເບິ່ງໃນປຶ້ມແບບຮຽນໄພພິບັດສຶກສາ, ແບບຮຽນວິທະຍາສາດທຳມະຊາດ ແລະ ສັງຄົມສຶກສາຊັ້ນມັດທະຍົມຕົ້ນ)
  + ຜົນກະທົບຂອງແຜ່ນດິນໄຫວຕໍ່ຊີວິດ, ຊັບສິນຂອງມວນມະນຸດ ແລະ ຕໍ່ສະພາບແວດລ້ອມ ເຊັ່ນ:ມີຄົນເສຍຊີວິດ, ຂາດທີ່ຢູ່ອາໄສ, ຂາດສະບຽງອາຫານ, ຂາດນ້ຳດື່ມ ແລະ ນ້ຳໃຊ້, ຂາດໄຟຟ້າ, ຂາດເສັ້ນທາງຄົມມະນາຄົມ, ຂາດການສື່ສານ... ສະພາບແວດລ້ອມຖືກທຳລາຍ.

**ກິດຈະກຳ 3: ສຶກສາໃນປຶ້ມແບບຮຽນ**

- **ແບ່ງນັກຮຽນອອກເປັນ 3 ກຸ່ມ ຕາມຄວາມເໝາະສົມ ແລ້ວໃຫ້ແຕ່ລະກຸ່ມສຶກສາກ່ຽວກັບແຜ່ນດິນໄຫວໃນປຶ້ມ ຈາກນັ້ນໃຫ້ຕອບຄຳຖາມດັ່ງນີ້:**

  **ກຸ່ມ 1: ເຫດການແຜ່ນດິນໄຫວທີ່ຮຸນແຮງທີ່ສຸດເກີດຂຶ້ນຢູ່ບ່ອນໃດ?**

  **ກຸ່ມ 2: ວິທີປ້ອງກັນ ແລະ ຫຼຸດຜ່ອນອັນຕະລາຍຈາກແຜ່ນດິນໄຫວເຮັດແນວໃດ?**

  **ກຸ່ມ 3: ຂະນະທີ່ກຳລັງເກີດແຜ່ນດິນໄຫວ ຄວນປະຕິບັດຕົນເອງແນວໃດ?**

  **ກຸ່ມ 4: ມີວິທີການຊ່ວຍເຫຼືອຜູ້ເຄາະຮ້າຍແນວໃດ?**

- **ຜູ້ຕາງໜ້າຂອງແຕ່ລະກຸ່ມລາຍງານຜົນຂອງການຄົ້ນຄວ້າ**
- **ຄູ ແລະ ນັກຮຽນສະຫຼຸບສັງລວມວິທີປ້ອງກັນ ແລະ ຫຼຸດຜ່ອນອັນຕະລາຍຈາກແຜ່ນດິນໄຫວ**

## V. ການວັດ ແລະ ປະເມີນຜົນ

ປະເມີນຄວາມຮູ້, ຄວາມເຂົ້າໃຈ ແລະ ຄວາມສາມາດຂອງນັກຮຽນການສັງເກດຈາກ:

- ຄວາມສົນໃຈ ແລະຄວາມຫ້າວຫັນໃນການຕອບຄຳຖາມແລະໃນການປະຕິບັດກິດຈະກຳກຸ່ມ
- ການປະກອບຄຳເຫັນໃນເວລາສົນທະນາກຸ່ມ ຫຼື ສົນທະນາລວມ

# ບົດທີ 4  ໄພນ້ຳຖ້ວມ

**ເວລາສອນ : 1 ຊົ່ວໂມງ**

**ບ່ອນສອນສອດແຊກ:** ວິຊາວິທະຍາສາດທຳມະຊາດ ຊັ້ນ ມ1
ບົດທີ 8  ນ້ຳຕໍ່ຊີວິດ, ຂໍ້ທີ 8.1.2 ຜົນເສຍຫາຍຈາກນ້ຳ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ບອກຄວາມໝາຍຂອງໄພນ້ຳຖ້ວມ.
- ອະທິບາຍລັກສະນະຂອງນ້ຳຖ້ວມແບບກະທັນຫັນ ແລະ ແບບລົ້ນຝັ່ງ.
- ບອກຜົນກະທົບທາງດ້ານດີ ແລະ ດ້ານເສຍຂອງໄພນ້ຳຖ້ວມ.
- ອະທິບາຍວິທີຫຼຸດຜ່ອນຜົນກະທົບທາງດ້ານເສຍຂອງນ້ຳຖ້ວມ.
- ການຊ່ວຍເຫຼືອຜູ້ເຄາະຮ້າຍຈາກໄພນ້ຳຖວມ

## II. ເນື້ອໃນຕົ້ນຕໍ

- ຄວາມໝາຍຂອງນ້ຳຖ້ວມ
- ລັກສະນະຂອງນ້ຳຖ້ວມ
- ສາເຫດທີ່ເຮັດໃຫ້ນ້ຳຖ້ວມ.
- ຜົນກະທົບຈາກໄພນ້ຳຖ້ວມ
- ການຫຼຸດຜ່ອນຜົນກະທົບຈາກໄພນ້ຳຖ້ວມ
- ການຊ່ວຍເຫຼືອຜູ້ເຄາະຮ້າຍຈາກໄພນ້ຳຖ້ວມ

## III. ສື່ການຮຽນ - ການສອນ

1. ຮູບນ້ຳຖ້ວມແບບກະທັນຫັນ, ແບບລົ້ນຝັ່ງ ແລະ ຄື້ນທະເລສູງຖ້ວມ.
2. ຮູບການຕັດໄມ້ທຳລາຍປ່າ, ຖົມໜອງ, ຖົ້ມຂີ້ເຫຍື້ອລົງນ້ຳ...
3. ປົວທິດສວນ, ກ້ອນຫີນ ຫຼື ດິນຈີ່ 2-3 ກ້ອນ.
4. ຊຸດບັດຄຳຖາມກ່ຽວກັບນ້ຳຖ້ວມ.
5. CD ກ່ຽວກັບໄພນ້ຳຖ້ວມ

## IV. ກິດຈະກຳການຮຽນ - ການສອນ

### ກິດຈະກຳ 1: ເກມ ຟ້າຮ້ອງ ຝົນຕົກ

- ຄູຖາມນັກຮຽນວ່າ:
  + ປະກົດການຂອງຝົນຕົກລວມມີຫຍັງແດ່ ? ( ຟ້າລົມ, ຟ້າຮ້ອງ ແລະ ຝົນຕົກ ).
- ຄູແນະນຳນັກຮຽນຫຼິ້ນເກມ. ເມື່ອຄູບອກວ່າ:
  " ລົມພັດ " ໃຫ້ນັກຮຽນເອົາ ມືຍົກຂຶ້ນສຸດແຂນແລ້ວແກວ່ງໄປມາ.
  " ຟ້າຮ້ອງ " ໃຫ້ນັກຮຽນຕົບມືຢູ່ເທິງຫົວ.
  " ຝົນຕົກ " ໃຫ້ນັກຮຽນເອົາມືຕົບຂາໂຕ້.
- ຄູອອກຄຳສັ່ງເຫຼົ່ານັ້ນສະຫຼັບກັນໄປ ແລະ ໃຫ້ນັກຮຽນປະຕິບັດໄປພ້ອມ. ໃຫ້ແຕ່ລະຄົນສັງເກດໝູ່ຜູ້ທີ່ເຮັດຜິດ. ຖ້າມີຜູ້ເຮັດຜິດໃຫ້ຕອບຄຳຖາມທີ່ຄູກຽມເປັນບັດຄຳຖາມໄວ້:
  + ຝົນເກີດມາແຕ່ໃສ ?
  + ມີຝົນຕົກແຮງໃນລະດູໃດ ?
  + ນ້ຳຖ້ວມມີຈັກແບບ, ແຕ່ລະແບບມີລັກສະນະແນວໃດ ?
  + ຢູ່ລາວເຮົາເຄີຍພົບເຫັນແບບນ້ຳຖ້ວມແບບໃດແດ່ ?
  + ເປັນຫຍັງຈຶ່ງມີຝົນຕົກບໍ່ຖືກລະດູ?
  + ເປັນຫຍັງ ບ້ານເຮົາຈຶ່ງມັກມີນ້ຳຖ້ວມຊຸ ?
  + ໄພນ້ຳຖ້ວມມີຄວາມໝາຍແນວໃດ ?
- ຄູຮ່ວມກັບນັກຮຽນສະຫຼຸບ:
  ນ້ຳຖ້ວມມີ 3 ແບບ: ຊຸກະທັນຫັນ,ລົ້ນຝັ່ງ ແລະ ຄື້ນທະເລສູງຖ້ວມ. ນ້ຳຖ້ວມທີ່ນຳຜົນເສຍຫາຍດ້ານຊັບສິນ , ຊີວິດຂອງຄົນ ແລະ ສັດ ເອີ້ນວ່າ ໄພນ້ຳຖ້ວມ.

### ກິດຈະກຳ 2: ທົດລອງສາເຫດຂອງນ້ຳຖ້ວມ.

- ຄູແບ່ງນັກຮຽນເປັນ 3 ກຸ່ມ:
  + ກຸ່ມທີ1. ເອົານ້ຳຖອກໃສ່ດິນທີ່ມີຫຍ້າ ແລະ ບໍ່ມີຫຍ້າ.
  + ກຸ່ມທີ2. ເອົານ້ຳຖອກໃສ່ບ່ອນຮ່ອງທີ່ມີຂີ້ເຫຍື້ອ ແລະ ຮ່ອງມີກອງດິນ ( ດິນເຈື່ອນຕັນຮ່ອງລະບາຍ ).
  + ກຸ່ມທີ3. ເອົາດິນຈີ່ ຫຼື ກ້ອນຫີນຕຳເຂົ້າກັນຢູ່ໃນຊາມນ້ຳເຕັມ, ສັ່ນຊາມນ້ຳ... (ສົມມຸດການເກີດເປັນຄື້ນຖ້ວມຂອບຊາມ).

- ຄູໃຫ້ແຕ່ລະກຸ່ມມີຜູ້ບັນທຶກ, ຜູ້ສັງເກດການໄຫຼ ແລະ ການເກີດເປັນຄື້ນຂອງນ້ຳ. ຫຼັງຈາກນັ້ນໃຫ້ແຕ່ລະກຸ່ມສົນທະນາ ແລະ ສະຫຼຸບຜົນການທົດລອງ.
- ໃຫ້ຜູ້ຕາງໜ້າກຸ່ມລາຍງານ.
- ຄູອະທິບາຍເພີ່ມສາເຫດຂອງນ້ຳຖ້ວມຍ້ອນຄື້ນທະເລສູງຖ້ວມ, ສາເຫດຈາກລົມພະຍຸ, ພູໄຟລະເບີດ, ແຜ່ນດິນໄຫວ...
- ຄູນຳພານັກຮຽນສະຫຼຸບ: ສາເຫດນ້ຳໄຫຼຊຸກະທັນຫັນ ແລະ ລົ້ນຝັ່ງ.

## ກິດຈະກຳ 3: ສົນທະນາກຸ່ມຜົນເສຍຫາຍຂອງໄພນ້ຳຖ້ວມ

- ຄູແບ່ງນັກຮຽນເປັນ 4 ກຸ່ມ:
  + ກຸ່ມທີ 1. ນ້ຳຖ້ວມມີຜົນດີຫຍັງແດ່ ?
  + ກຸ່ມທີ 2. ນ້ຳຖ້ວມມີຜົນເສຍຫາຍຫຍັງແດ່ ?
  + ກຸ່ມທີ 3. ນ້ຳຖ້ວມພາໃຫ້ເກີດພະຍາດຫຍັງແດ່ ?
  + ກຸ່ມທີ 4. ນ້ຳຖ້ວມແບບໃດເສຍຫາຍຫຼາຍທີ່ສຸດ ?
- ໃຫ້ຜູ້ຕາງໜ້າກຸ່ມລາຍງານ.
- ຄູນຳພານັກຮຽນສະຫຼຸບ: ຜົນກະທົບໃນດ້ານດີ ແລະ ດ້ານເສຍຂອງໄພນ້ຳຖ້ວມ.

## ກິດຈະກຳ 4: ຖາມ - ຕອບວິທີຫຼຸດຜ່ອນຜົນເສຍຫາຍຈາກໄພນ້ຳຖ້ວມ

- ຄູຕັ້ງຄຳຖາມສົນທະນາກັບນັກຮຽນວ່າ:
  + ຢາກຫຼຸດຜ່ອນຜົນເສຍຫາຍຈາກໄພນ້ຳຖ້ວມຄົນເຮົາຄວນເຮັດແນວໃດ ?
  + ກ່ອນເກີດນ້ຳຖ້ວມເຮົາຕ້ອງກະກຽມຫຍັງແດ່ ?
  + ໃນເວລາທີ່ນ້ຳກຳລັງຖ້ວມເຮົາຕ້ອງປະຕິບັດຕົນແນວໃດ ?
  + ເຮົາຄວນກິນ ແລະ ດື່ມແນວໃດ ?
  + ຫຼັງນ້ຳບົກແຫ້ງເຮົາຕ້ອງເຮັດຫຍັງແດ່ ?
- ຄູນຳພານັກຮຽນສະຫຼຸບ: ການປະຕິບັດວິທີການເພື່ອຫຼຸດຜ່ອນຜົນເສຍຫາຍຈາກໄພນ້ຳຖ້ວມ.
- ຄູໃຫ້ນັກຮຽນຕອບຕາມຄວາມເຂົ້າໃຈ ແລະ ຫຼັງຈາກນັ້ນຄູອະທິບາຍ (ຕາມປຶ້ມແບບຮຽນ) ສິ່ງທີ່ຄວນປະຕິບັດຕໍ່ຄົນຕົກນ້ຳ, ງູກັດ ແລະ ເບື່ອອາຫານ.
- ຄູນຳພານັກຮຽນປະຕິບັດເຫດການສົມມຸດການຊ່ວຍຜູ້ເຄາະຮ້າຍ.

## V. ການວັດ ແລະ ປະເມີນຜົນ

ປະເມີນຄວາມຮູ້, ຄວາມເຂົ້າໃຈ ແລະ ຄວາມສາມາດຂອງນັກຮຽນຈາກການສັງເກດ ແລະ ການປະເມີນ ເຊັ່ນ:

1. ຄູສັງເກດຜົນຈາກການປະຕິບັດກິດຈະກຳ, ຕອບຄຳຖາມ, ຄວາມສົນໃຈ, ການສົນທະນາ ແລະ ການລາຍງານຜົນ.
2. ວັດຜົນຈາກການເຮັດບົດກວດກາ, ວຽກບ້ານ.
3. ຄຳຖາມ:
   + ເມື່ອມີນ້ຳຖ້ວມນັກຮຽນຄວນເຮັດຫຍັງຊ່ວຍພໍ່ແມ່ ?
   + ນັກຮຽນມີຂໍ້ຄິດຫຍັງແດ່ເພື່ອຫຼຸດຜ່ອນຜົນເສຍເຫຍຈາກໄພນ້ຳຖ້ວມ ?

# ບົດທີ 5 ໄພແຫ້ງແລ້ງ

ເວລາສອນ : 1 ຊົ່ວໂມງ

**ບ່ອນສອນສອດແຊກ:** ບົດທີ 9 ອາກາດ. ຂໍ້ 9.5. ມົນພາວະອາກາດ **ວິຊາວິທະຍາສາດທຳມະຊາດ**

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ :

- ບອກຄວາມໝາຍຂອງໄພແຫ້ງແລ້ງ.
- ອະທິບາຍສາເຫດທີ່ພາໃຫ້ເກີດໄພແຫ້ງແລ້ງ.
- ບອກຜົນກະທົບທີ່ເກີດຈາກໄພແຫ້ງແລ້ງ.
- ອະທິບາຍວິທີການຫຼຸດຜ່ອນຜົນກະທົບທີ່ເກີດຈາກໄພແຫ້ງແລ້ງ.

## II. ເນື້ອໃນຕົ້ນຕໍ

- ຄວາມໝາຍຂອງໄພແຫ້ງແລ້ງ,
- ສາເຫດທີ່ພາໃຫ້ເກີດໄພແຫ້ງແລ້ງ,
- ຜົນກະທົບທີ່ເກີດຈາກໄພແຫ້ງແລ້ງ
- ການຫຼຸດຜ່ອນຜົນກະທົບຈາກໄພແຫ້ງແລ້ງ.

## III. ສື່ການຮຽນ - ການສອນ

- ຮູບພາບຕ່າງໆ ກ່ຽວກັບໄພແຫ້ງແລ້ງເຊັ່ນ: ການຕັດໄມ້ທຳລາຍປ່າ, ການຈູດປ່າ, ຫ້ວຍ, ໜອງ, ຄອງ, ບຶງ ບົກແຫ້ງ.
- CD ກ່ຽວກັບໄພແຫ້ງແລ້ງ

## IV. ກິດຈະກຳການຮຽນ - ການສອນ

### ກິດຈະກຳ1: ສົນທະນາລວມກ່ຽວກັບຄວາມໝາຍຂອງໄພແຫ້ງແລ້ງ

- ຄູເອົາຮູບພາບກ່ຽວກັບໄພແຫ້ງແລ້ງຕ່າງໆ ໃຫ້ນັກຮຽນເບິ່ງ ແລ້ວຕັ້ງຄຳຖາມສົນທະນາກັບນັກຮຽນເຊັ່ນ: ມີໃຜເຄີຍພົບກັບໄພແຫ້ງແລ້ງ ? ພົບຢູ່ໃສ ? ເມື່ອໃດ ? ເປັນແນວໃດ ? ແລະ ມີຄວາມຮູ້ສຶກແນວໃດຕໍ່ກັບໄພແຫ້ງແລ້ງນັ້ນ ?
- ຄູສະຫຼຸບຄຳເຫັນຂອງນັກຮຽນ.

### ກິດຈະກຳ 2: ສົນທະນາເປັນກຸ່ມ

- ແບ່ງນັກຮຽນອອກເປັນ 4 ກຸ່ມ ແລ້ວໃຫ້ແຕ່ລະກຸ່ມຄົ້ນຄວ້າ 1 ຄຳຖາມດັ່ງລຸ່ມນີ້:
  + ຄວາມໝາຍຂອງໄພແຫ້ງແລ້ງແມ່ນຫຍັງ ?
  + ສາເຫດທີ່ພາໃຫ້ເກີດໄພແຫ້ງແລ້ງມີຫຍັງແດ່ ?
  + ຜົນກະທົບຂອງໄພແຫ້ງແລ້ງເປັນແນວໃດ ?
  + ເຮັດແນວໃດຈຶ່ງຈະຫຼຸດຜ່ອນຜົນກະທົບຈາກໄພແຫ້ງແລ້ງ ?
- ນັກຮຽນແຕ່ລະກຸ່ມສົນທະນາ, ຄົ້ນຄວ້າຫາຄຳຕອບ.
- ຜູ້ຕາງໜ້າແຕ່ລະກຸ່ມຂຶ້ນລາຍງານ.
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບຜົນຂອງກິດຈະກຳ ແລະ ໃຫ້ຄຳຕິຊົມນັກຮຽນແຕ່ລະກຸ່ມ.
- ຄູອະທິບາຍ ແລະ ສະຫຼຸບຄືນທັງໝົດເນື້ອໃນບົດຮຽນ.

## V. ການວັດ ແລະ ປະເມີນຜົນ.

ປະເມີນຄວາມຮູ້, ຄວາມເຂົ້າໃຈ ແລະ ຄວາມສາມາດຂອງນັກຮຽນສັງເກດຈາກ:

- ການບອກຄວາມໝາຍຂອງໄພແຫ້ງແລ້ງ.
- ການອະທິບາຍສາເຫດທີ່ພາໃຫ້ເກີດໄພແຫ້ງແລ້ງ.
- ການບອກຜົນກະທົບທີ່ເກີດຈາກໄພແຫ້ງແລ້ງ.
- ການບອກກ່ຽວກັບການຫຼຸດຜ່ອນຜົນກະທົບທີ່ເກີດຈາກໄພແຫ້ງແລ້ງ.
- ຜົນຂອງການເຮັດກິດຈະກຳ.

# ບົດທີ 6 ອັກຄີໄພ

**ເວລາສອນ :** 1 ຊົ່ວໂມງ

**ບ່ອນສອນສອດແຊກ** : ບົດທີ 6. ຂໍ້ທີ 5 ວິຊາວິທະຍາສາດທຳມະຊາດ

## I. ຈຸດປະສົງ

ໃຫ້ນັກຮຽນສາມາດ:

- ບອກຄວາມໝາຍຂອງອັກຄີໄພ.
- ສາມາດອະທິບາຍເຖິງສາເຫດທີ່ພາໃຫ້ເກີດອັກຄີໄພ.
- ອະທິບາຍຄວາມເປັນອັນຕະລາຍຈາກອັກຄີໄພ.
- ບອກວິທີປ້ອງກັນອັກຄີໄພ.

## II. ເນື້ອໃນຕົ້ນຕໍ

- ຄວາມໝາຍຂອງອັກຄີໄພ.
- ສາເຫດທີ່ພາໃຫ້ເກີດອັກຄີໄພ.
- ການຕິດໄຟຂອງວັດຖຸເຊື້ອໄຟຊະນິດຕ່າງໆ.
- ວິທີການຫຼຸດຜ່ອນຄວາມເສຍຫາຍຈາກອັກຄີໄພ
- ວິທີການປ້ອງກັນບໍ່ໃຫ້ເກີດອັກຄີໄພ.

## III. ສື່ການຮຽນ - ການສອນ

- ຮູບ ຫຼື ແຜ່ນໂປສເຕີກ່ຽວກັບໄຟໄໝ້.
- ຂີ້ເຫຍື້ອແຫ້ງ , ຂີ້ດິນຊາຍ 1 ຄຸນ້ອຍ , ນໍ້າ 1 ນ້ອຍ,

## IV. ກິດຈະກຳການຮຽນ - ການສອນ

### 1. ສົນທະນາລວມ

- ຄູສົນທະນາກັບນັກຮຽນໂດຍໃຊ້ຄຳຖາມ:
  + ມີຜູ້ໃດໄດ້ເຫັນ ຫຼື ໄດ້ຮູ້ຂ່າວໄຟໄໝ້ເຮືອນ ຫຼື ບ້ານ ບໍ່ ?
  + ເຫດການໄຟໄໝ້ນັ້ນເກີດຂຶ້ນຍ້ອນຫຍັງ ?
  + ບັນຍາກາດຂະນະໄຟໄໝ້ເຮືອນນັ້ນເປັນແນວໃດ ?

+ ມີຄວາມເສຍຫາຍຫຍັງແດ່ເກີດຂຶ້ນ ?

+ ຖ້າໄຟໄໝ້ໂຮງຮຽນຂອງພວກເຮົາຈະເປັນແນວໃດ ?

+ ເພື່ອບໍ່ໃຫ້ເກີດໄຟໄໝ້ເຮືອນ ຫຼື ໂຮງຮຽນ ພວກເຮົາຄວນເຮັດແນວໃດ ?

**ກິດຈະກຳທີ2: ທົດລອງສາທິດການຕິດໄຟ ແລະ ມອດໄຟ**

- ຈັດຂີ້ເຫຍື້ອທີ່ເປັນ 2 ກອງ ແລ້ວ ຈູດກອງທີໜຶ່ງດ້ວຍແປວໄຟ ແລະ ຈູດກອງທີສອງດ້ວຍ ຖ່ານ ໄຟ ແດງຫຼືໂຄ້ນໄຟແດງບໍ່ມີແປວ. ເມື່ອຂີ້ເຫຍື້ອຢູ່ໃນ ແຕ່ລະກອງໄໝ້ ລຸກເປັນ ແປວ ແລ້ວ ໃຫ້ມອດດ້ວຍວິທີຕ່າງກັນຄື: ກອງທີໜຶ່ງໃຊ້ນ້ຳທົດ ,ກອງທີສອງໃຊ້ດິນຊາຍພົກໃສ່.
- ຄູສົນທະນາກັບນັກຮຽນໂດຍໃຊ້ຄຳຖາມນຳດັ່ງນີ້:

+ ເມື່ອຈູດວັດຖຸຊະນິດດຽວກັນດ້ວຍໄຟຕ່າງກັນ ມັນຕິດໄຟຕ່າງກັນແນວໃດ ?

+ ການໄໝ້ ຫຼື ການຕິດໄຟຂອງວັດຖຸຊະນິດຕ່າງໆ ຕ່າງກັນແນວໃດ?

+ ເມື່ອເອົານ້ຳທົດໃສ່ໄຟໄໝ້ຂີ້ເຫຍື້ອກອງທີໜຶ່ງ ແລະ ເອົາຂີ້ຊາຍພົກໃສ່ໄຟໄໝ້ຂີ້ເຫຍື້ອກອງທີສອງ, ໄຟໄໝ້ຂີ້ເຫຍື້ອແຕ່ລະກອງເປັນແນວໃດ ?

+ ເຮົາຈະໃຊ້ນ້ຳມອດໄຟທີ່ໄໝ້ວັດຖຸທຸກຢ່າງໄດ້ບໍ່ ? ຍ້ອນຫຍັງ ?

- ຄູ ແລະ ນັກຮຽນ ຮ່ວມກັນສະຫຼຸບກ່ຽວກັບການຕິດໄຟ ຂອງວັດຖຸເຊື້ອໄຟ ແລະ ການມອດໄຟ.

**ກິດຈະກຳທີ3: ສົນທະນາລວມເຖິງວິທີການຫຼຸດຜ່ອນຄວາມເສຍຫາຍຈາກອັກຄີໄພ ແລະ ການປ້ອງກັນບໍ່ໃຫ້ເກີດອັກຄີໄພ**

- ຄູສົນທະນາກັບນັກຮຽນໂດຍໃຊ້ຄຳຖາມ:

+ ເຮັດແນວໃດຈຶ່ງຈະຫຼຸດຜ່ອນຄວາມເສຍຫາຍຈາກອັກຄີໄພລົງໄດ້ ?

+ ເຮັດແນວໃດຈຶ່ງຈະປ້ອງກັນບໍ່ໃຫ້ອັກຄີໄພເກີດຂຶ້ນໄດ້ ?

- ຄູ ຮ່ວມກັບນັກຮຽນສະຫຼຸບກ່ຽວກັບວິທີການຫຼຸດຜ່ອນ ແລະ ການປ້ອງກັນບໍ່ໃຫ້ເກີດ ອັກຄີໄພ

## V. ການວັດ ແລະ ປະເມີນຜົນ

ປະເມີນຄວາມຮູ້, ຄວາມເຂົ້າໃຈ ແລະ ຄວາມສາມາດຂອງນັກຮຽນຈາກການສັງເກດ : ການປະກອບສ່ວນສົນທະນາກັບໝູ່ ແລະ ຄູ, ຄວາມສົນໃຈຕໍ່ການຮຽນ.

# ບົດທີ 7 ບັນຫາມົນລະພິດ

**ເວລາສອນ : 1 ຊົ່ວໂມງ**

**ບ່ອນສອນສອດແຊກ** : ບົດທີ 8. ຂໍ້ 8. 4. ແລະ ບົດທີ 9. ຂໍ້ 9.5  ວິຊາວິທະຍາສາດທຳມະຊາດ

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ :

- ບອກຄວາມໝາຍຂອງມົນລະພິດໄດ້.
- ບອກຄວາມໝາຍຂອງມົນລະພິດທາງນໍ້າ ແລະ ທາງອາກາດໄດ້.
- ບອກສາເຫດທີ່ພາໃຫ້ເກີດມົນລະພິດທາງນໍ້າ ແລະ ທາງອາກາດໄດ້.
- ອະທິບາຍຜົນກະທົບຂອງມົນລະພິດທາງນໍ້າ ແລະ ທາງອາກາດຕໍ່ສິ່ງແວດລ້ອມໄດ້.
- ບອກວິທີປ້ອງກັນ ແລະ ແກ້ໄຂກ່ຽວກັບບັນຫາມົນລະພິດທາງນໍ້າ ແລະ ທາງອາກາດໄດ້.
- ບອກສິ່ງທີ່ຕົນເອງຊ່ວຍໄດ້ໃນການຫຼຸດຜ່ອນ ຫຼື ແກ້ໄຂບັນຫາມົນລະພິດທາງນໍ້າ ແລະ ມົນລະພິດທາງອາກາດ.

## II. ເນື້ອໃນຕົ້ນຕໍ

- ຄວາມໝາຍຂອງມົນລະພິດ
- ມົນລະພິດທາງນໍ້າ ແລະ ທາງອາກາດ.
- ສາເຫດທີ່ພາໃຫ້ເກີດມົນລະພິດທາງນໍ້າ ແລະ ທາງອາກາດ.
- ຜົນກະທົບຂອງມົນລະພິດທາງນໍ້າ ແລະ ທາງອາກາດ.
- ວິທີການປ້ອງກັນ ແລະ ແກ້ໄຂບັນຫາມົນລະພິດທາງນໍ້າ ແລະ ມົນລະພິດທາງອາກາດ.

## III. ສື່ການຮຽນ - ການສອນ

1. ປຶ້ມແບບຮຽນເພີ່ມກ່ຽວກັບໄພພິບັດ.
2. ຮູບໂຄສະນາ ຫຼື ໂປສະເຕີ ທີ່ມີເນື້ອໃນກ່ຽວກັບມົນລະພິດທາງນໍ້າ ແລະ ທາງອາກາດ.
3. ໂຖແກ້ວ ຫຼື ຈອກແກ້ວໃສ, ນໍ້າມັນເຄື່ອງຈັກທີ່ໃຊ້ແລ້ວ, ນໍ້າສີ ຫຼື ສີຝຸ່ນ, ຂີ້ເຖົ່າ ...

## IV. ກິດຈະກຳການຮຽນ - ການສອນ

## ກິດຈະກຳທີ 1: ສົນທະນາລວມກ່ຽວກັບບັນຫາມົນລະພິດ

- ຄູສົນທະນາກັບນັກຮຽນເຖິງ ການກຳຈັດຂີ້ເຫຍື້ອ ແລະ ການລະບາຍນ້ຳທີ່ເສດເຫຼືອ ຈາກການໃຊ້ງານຕ່າງໆ ໃນບ້ານ ແລະ ເຮືອນຂອງນັກຮຽນ ໂດຍໃຊ້ຄຳຖາມ:
  + ການກຳຈັດຂີ້ເຫຍື້ອ ຢູ່ເຮືອນ ແລະບ້ານຂອງນັກຮຽນເຮັດແນວໃດ ?
  + ການລະບາຍນ້ຳທີ່ໃຊ້ແລ້ວເຮັດແນວໃດ ?
  ( ຄຳເຫັນຂອງນັກຮຽນແຕ່ລະຄົນໃຫ້ຄູບັນທຶກໃສ່ກະດານເອົາໄວ້ )
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບ ວິທີການກຳຈັດຂີ້ເຫຍື້ອ ແລະ ການລະບາຍນ້ຳ ທີ່ນັກຮຽນສະເໜີນັ້ນ.

## ກິດຈະກຳທີ 2: ທົດລອງສາທິດກ່ຽວກັບມົນລະພິດທາງນ້ຳ

ຄູ ແລະ ນັກຮຽນ ຈຳນວນໜຶ່ງປະຕິບັດການທົດລອງສາທິດກ່ຽວກັບມົນລະພິດທາງນ້ຳ ດັ່ງນີ້:.

- ຄູເອົານ້ຳສະອາດຖອກໃສ່ ໂຖແກ້ວ ຫຼື ຈອກແກ້ວ ກາຍເຄິ່ງຈອກເລັກໜ້ອຍ. ຫຼັງຈາກນັ້ນໃຫ້ນັກຮຽນທັງໝົດສັງເກດເບິ່ງ ນ້ຳໃນໂຖແກ້ວ
- ໃຫ້ນັກຮຽນ 3 ຄົນອອກມາເອົາ ນ້ຳສີ, ນ້ຳມັນເຄື່ອງ, .. ໃສ່ນ້ຳໃນໂຖ ໂດຍແຕ່ລະຄົນໃຫ້ ໃສ່ 1 ຢ່າງ ແລະ ໃສ່ພຽງໜ້ອຍໜຶ່ງ. ຫຼັງຈາກນັ້ນໃຫ້ນັກຮຽນທັງໝົດສັງເກດເບິ່ງນ້ຳໃນກວດແກ້ວ ອີກເທື່ອໜຶ່ງ.
- ໃຫ້ນັກຮຽນ 5 ຄົນ ອອກມາ ເອົານ້ຳສີ, ນ້ຳມັນເຄື່ອງ...ໃສ່ນ້ຳໃນໂຖນັ້ນຕື່ມອີກ ໂດຍໃຫ້ ແຕ່ລະຄົນໃສ່ຕາມໃຈ. ຫຼັງຈາກນັ້ນໃຫ້ນັກຮຽນທັງໝົດ ສັງເກດເບິ່ງນ້ຳໃນກວດແກ້ວ ຕື່ມອີກຄັ້ງໜຶ່ງ.
- ຄູສົນທະນາລວມກັບນັກຮຽນໂດຍໃຊ້ຄຳຖາມດັ່ງນີ້:
  + ນ້ຳໃນໂຖ ທີ່ຍັງບໍ່ໄດ້ເອົາຫຍັງໃສ່ ເປັນແນວໃດ?
  + ຫຼັງຈາກ 3 ຄົນ ເອົານ້ຳສີ, ນ້ຳມັນເຄື່ອງ, ຂີ້ເຖົ່າໃສ່. ນ້ຳໃນກວດແກ້ວເປັນແນວໃດ ?
  + ຫຼັງຈາກ 5 ຄົນ ເອົານ້ຳສີ, ນ້ຳມັນເຄື່ອງ, ຂີ້ເຖົ່າ ໃສ່... ນ້ຳໃນໂຖແກ້ວເປັນແນວໃດ ?
  + ນ້ຳທີ່ມີຫຼາຍສິ່ງປົນຢູ່ຫຼາຍ ຈົນບໍ່ສາມາດໃຊ້ເປັນນ້ຳກິນນ້ຳໃຊ້ໄດ້ ເອີ້ນວ່າແນວໃດ?
  + ອາກາດທີ່ມີກິ່ນ, ຄວັນ, ຝຸ່ນລະອອງ... ເຈືອປົນຢູ່ຫຼາຍເອີ້ນວ່າແນວໃດ ?
  + ສາເຫດທີ່ພາໃຫ້ເກີດມົນລະພິດທາງນ້ຳ ຍ້ອນຫຍັງ ?
  + ສາເຫດທີ່ພາໃຫ້ເກີດມົນລະພິດທາງອາກາດ ຍ້ອນຫຍັງ ?
  + ຜົນກະທົບຂອງມົນລະພິດທາງນ້ຳ ມີຫຍັງແດ່ ?
  + ຜົນກະທົບຂອງມົນລະພິດທາງອາກາດ ມີຫຍັງແດ່ ?
  + ເພື່ອປ້ອງກັນ ແລະ ຫຼຸດຜ່ອນ ມົນລະພິດທາງນ້ຳ ແລະ ອາກາດຈະເຮັດແນວໃດ ?

## V. ການວັດ ແລະ ປະເມີນຜົນ

ປະເມີນຄວາມຮູ້, ຄວາມເຂົ້າໃຈ ແລະ ຄວາມສາມາດຂອງນັກຮຽນ ໂດຍພິຈາລະນາຈາກ: ຄວາມຕື່ນຕົວສະມັກໃຈປະກອບສ່ວນເຮັດການທົດລອງ, ຄວາມຖືກຕ້ອງຂອງຄຳເຫັນກ່ຽວກັບການບອກ: ຄວາມໝາຍຂອງມົນລະພິດ, ສາເຫດທີ່ພາໃຫ້ເກີດ, ຜົນກະທົບ ແລະ ວິທີການ ປ້ອງກັນ, ແກ້ໄຂບັນຫາ ຫຼື ຫຼຸດຜ່ອນ ມົນລະພິດທາງນ້ຳ ແລະ ມົນລະພິດທາງອາກາດ.

# ບົດທີ 8 ອຸບັດເຫດທີ່ເກີດຂຶ້ນຕາມທ້ອງຖະໜົນ

ເວລາສອນ : 1 ຊົ່ວໂມງ

**ບ່ອນສອນສອດແຊກ** : ວິຊາ ສຶກສາພົນລະເມືອງ ມ.1 ບົດທີ 19

## I. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ບອກຄວາມໝາຍຂອງອຸບັດເຫດ
- ບອກສາເຫດທີ່ພາໃຫ້ເກີດອຸບັດເຫດຕາມທ້ອງຖະໜົນ.
- ອະທິບາຍຜົນກະທົບຈາກການເກີດອຸບັດເຫດ.
- ບອກວິທີປ້ອງກັນ ແລະປະຕິບັດຫຼັງເກີດອຸບັດເຫດ.
- ບອກຄວາມໝາຍປ້າຍຈະລາຈອນບາງປ້າຍ
- ປະຕິບັດກົດຈະລາຈອນ.

## II. ເນື້ອໃນຕົ້ນຕໍ

- ຄວາມໝາຍອຸບັດເຫດຕາມທ້ອງຖະໜົນ
- ສາເຫດທີ່ພາໃຫ້ເກີດອຸບັດເຫດ
- ຜົນກະທົບຂອງອຸບັດເຫດຕໍ່ ຕົນເອງ, ຄອບຄົວ ແລະ ສັງຄົມ
- ວິທີປ້ອງກັນບໍ່ໃຫ້ເກີດອຸບັດເຫດ
- ວິທີຫຼຸດຜ່ອນອັນຕະລາຍຈາກອຸບັດເຫດ
- ການປະຕິບັດເກີດອຸບັດເຫດ

## III. ສື່ການຮຽນ - ການສອນ

- ຮູບອຸບັດເຫດທີ່ເກີດຕາມທ້ອງຖະໜົນ.
- ປ້າຍສັນຍານ ແລະ ເຄື່ອງໝາຍກ່ຽວກັບການຈະລາຈອນ.
- ຮູບພາບ, ໂປສເຕີ ແລະ ຂໍ້ມູນຕ່າງໆ ທີ່ພົວພັນເຖິງອຸບັດເຫດ, ການປ້ອງກັນ ແລະ ຫຼຸດຜ່ອນອຸບັດເຫດ, ການຫຼຸດຜ່ອນຄວາມເສຍຫາຍຈາກອຸບັດເຫດ

## IV. ກິດຈະກຳການຮຽນ - ການສອນ

### ກິດຈະກຳ 1: ສົນທະນາລວມກ່ຽວກັບຄວາມໝາຍ ແລະ ສາເຫດ

- ຄູກະຕຸ້ນໃຫ້ນັກຮຽນອອກຄຳເຫັນໂດຍໃຊ້ຄຳຖາມດັ່ງນີ້:
  + ມີຜູ້ໃດໄດ້ເຫັນອຸບັດເຫດເກີດຂຶ້ນ ຫຼື ຮູ້ຂ່າວການເກີດອຸບັດເຫດແດ່ ?
  + ອຸບັດເຫດທີ່ເຫັນ ຫຼື ຮູ້ ນັ້ນເກີດຂຶ້ນຍ້ອນຫຍັງ ?
  +ໂດຍທົ່ວໄປສາເຫດທີ່ພາໃຫ້ເກີດອຸບັດເຫດມີຫຍັງແດ່?
  ( ຄຳຕອບຂອງນັກຮຽນແຕ່ລະຄົນໃຫ້ບັນທຶກໃສ່ກະດານເອົາໄວ້ )
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບຕາມຄຳເຫັນທີ່ແຕ່ລະຄົນສະເໜີຂຶ້ນ ຈົນໃຫ້ໄດ້ ຄວາມໝາຍ
  ແລະ ສາເຫດຂອງອຸບັດເຫດ ( ຈາກຄົນ, ຈາກຍານພາຫະນະ ແລະ ຈາກສິ່ງແວດລ້ອມ )

### ກິດຈະກຳ 2: ສົນທະນາກຸ່ມກ່ຽວກັບຜົນກະທົບ

- ຄູແບ່ງນັກຮຽນອອກເປັນ 3 ກຸ່ມ, ຈາກນັ້ນໃຫ້ແຕ່ລະກຸ່ມຄົ້ນຄວ້າ ຫາຄຳຕອບຄຳຖາມດັ່ງນີ້:
  + ອຸບັດເຫດມີຜົນກະທົບຕໍ່ຕົນເອງແນວໃດ ?
  + ອຸບັດເຫດມີຜົນກະທົບຕໍ່ຄອບຄົວແນວໃດ ?
  + ອຸບັດເຫດມີຜົນກະທົບຕໍ່ສັງຄົມແນວໃດ ?
- ຜູ້ຕາງໜ້າແຕ່ລະກຸ່ມລາຍງານ.
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບໃຫ້ເຫັນວ່າອຸບັດເຫດເຮັດໃຫ້ມີຜົນກະທົບຕໍ່ ຕົນເອງ, ຄອບຄົວ ແລະ ສັງຄົມ

### ກິດຈະກຳ 3. ສົນທະນາເປັນຄູ່ກ່ຽວກັບການປ້ອງກັນ ແລະ ປະຕິບັດຫຼັງອຸບັດເຫດ

- ນັກຮຽນແຕ່ລະຄົນອ່ານເນື້ອໃນ ກ່ຽວກັບວິທີປ້ອງກັນ ແລະ ປະຕິບັດຫຼັງອຸບັດເຫດ
- ນັກຮຽນຈັບຄູ່ກັນ ສົນທະນາເຖິງ ວິທີປ້ອງກັນບໍ່ໃຫ້ເກີດອຸບັດເຫດ ແລະ ການປະຕິບັດຫຼັງເກີດອຸບັດເຫດ.
- ໃຫ້ຜູ້ຕາງໜ້າ3 - 4 ຄູ່ ລາຍງານ; ສຳລັບນັກຮຽນຜູ້ອື່ນປະກອບຄວາມຄິດເຫັນຖ້າເຫັນວ່າຍັງບໍ່ຄົບຖ້ວນສົມບູນ.

## V. ການວັດ ແລະ ປະເມີນຜົນ

ປະເມີນຄວາມຮູ້, ຄວາມເຂົ້າໃຈ ແລະ ຄວາມສາມາດຂອງນັກຮຽນຈາກ: ຄວາມຫ້າວຫັນໃນການອອກຄຳເຫັນ, ຄວາມຖືກຕ້ອງຂອງແຕ່ລະຄຳເຫັນ, ການມີສ່ວນຮ່ວມໃນກິດຈະກຳກຸ່ມ, ການປະພຶດຕົນໃນຕົວຈິງ.

# ບົດທີ 9 ຄວາມວຸ້ນວາຍໃນສັງຄົມ

ເວລາສອນ : 1 ຊົ່ວໂມງ

**ບ່ອນສອນສອດແຊກ : ວິຊາສຶກສາພົນລະເມືອງ ມ.1**
**ບົດທີ 18 ( ໜ້າທີ່ຂອງພົນລະເມືອງດີຕໍ່ສັງຄົມ )**

## I. ຈຸດປະສົງ

ໃຫ້ນັກຮຽນສາມາດ:

- ບອກຄວາມໝາຍຂອງຄວາມວຸ້ນວາຍໃນສັງຄົມ
- ບອກສາເຫດທີ່ພາໃຫ້ເກີດການພະນັນ ແລະ ຕິດສິ່ງເສບຕິດ.
- ອະທິບາຍຜົນກະທົບຂອງ ການຫຼິ້ນການພະນັນ ແລະ ຕິດສິ່ງເສບຕິດ.
- ອະທິບາຍວິທີປ້ອງກັນບໍ່ໃຫ້ເກີດ ການຫຼິ້ນການພະນັນ ແລະ ຕິດສິ່ງເສບຕິດ.

## II. ເນື້ອໃນຕົ້ນຕໍ

- ຄວາມໝາຍຂອງການພະນັນ
- ການຫຼິ້ນການພະນັນ
- ການຕິດສິ່ງເສບຕິດ
- ຜົນກະທົບຈາກຄວາມວຸ້ນວາຍໃນສັງຄົມ
- ວິທີປ້ອງກັນບໍ່ໃຫ້ເກີດຄວາມວຸ້ນວາຍໃນສັງຄົມ

## III. ສື່ການຮຽນ - ການສອນ

ຮູບພາບການຫຼິ້ນການພະ ນັນ ເຊັ່ນ: ການຫຼິ້ນໄພ້, ຫຼິ້ນກຸ້ງໄກ່ ... ແລະ ເສບສິ່ງເສບຕິດ ຕ່າງໆ ເທົ່າທີ່ສາມາດຫາໄດ້.

## IV. ກິດຈະກຳການຮຽນ - ການສອນ

ກິດຈະກຳ 1: **ສົນທະນາລວມກ່ຽວກັບຄວາມວຸ້ນວາຍໃນສັງຄົມ**

- ຄູໃຫ້ນັກຮຽນອາສາສະໝັກ 2 - 5 ຄົນ ເລົ່າບາງເຫດການທີ່ເກີດຂຶ້ນໃນບ້ານຂອງຕົນເອງ ເຊັ່ນ: ຜິດຖຽງກັນ, ຕີກັນ , ຫຼິ້ນໄພ້, ຫຼິ້ນໝາກກຸ້ງໄກ່, ຕິດເກມ, ຕິດຢາມ້າ.... ໃຫ້ໝູ່ ແລະ ຄູຟັງ ໂດຍແຕ່ລະເຫດການ ໃຫ້ບອກ: ສາເຫດ ແລະ ຜົນກະທົບ ຕໍ່ຜູ້ຫຼິ້ນເອງ, ຕໍ່ຄອບຄົວ ແລະ ຕໍ່ ເຈົ້າໜ້າທີ່ຢູ່ໃນທ້ອງຖິ່ນ ພ້ອມ.

- ຄູ ແລະ ນັກຮຽນພ້ອມກັນສະຫຼຸບເຫດການທີ່ນັກຮຽນເລົ່າຜ່ານມາ ແລະ ຊີ້ໃຫ້ເຫັນຜົນເສຍຫາຍທີ່ຕາມມາຂອງແຕ່ລະເຫດການນັ້ນ. ຖ້າເຫດການໃດມີຮູບພາບ ທີ່ກ່ຽວຂ້ອງຢູ່ໃນຮູບທີ່ຫາມາໄດ້ໃຫ້ຄູສະແດງຮູບພາບນັ້ນໃຫ້ນັກຮຽນເບິ່ງ ແລ້ວຈຶ່ງຮ່ວມກັບນັກຮຽນສົນທະນາສະຫຼຸບ

ກິດຈະກຳ 2: ສົນທະນາກຸ່ມ

- ຄູແບ່ງນັກຮຽນອອກເປັນ 4 ກຸ່ມ. ຈາກນັ້ນໃຫ້ແຕ່ລະກຸ່ມຄົ້ນຄວ້າຫາຄຳຕອບຄຳຖາມລຸ່ມນີ້:
  + ສາເຫດ ແລະ ຜົນກະທົບຂອງການຫຼິ້ນການພະນັນມີຫຍັງແດ່ ?
  + ສາເຫດ ແລະ ຜົນກະທົບຂອງການຕິດສິ່ງເສບຕິດມີຫຍັງແດ່ ?
  + ພວກເຮົາຈະມີວິທີປ້ອງກັນ ການຕິດການພະນັນແນວໃດ ?
  + ພວກເຮົາຈະມີວິທີປ້ອງກັນ ການຕິດສິ່ງເສບຕິດແນວໃດ ?
- ຄູໃຫ້ແຕ່ລະກຸ່ມເລືອກຄົ້ນຄວ້າ 1 ຄຳຖາມ. ເມື່ອຄົ້ນຄວ້າເຫັນດີເປັນເອກະພາບກັນແລ້ວໃຫ້ ຂຽນຄຳຕອບໃສ່ເຈ້ຍບັນທຶກຂອງກຸ່ມຕົນເອງ.
- ໃຫ້ຜູ້ຕາງໜ້າຂອງແຕ່ລະກຸ່ມລາຍງານຜົນການຄົ້ນຄວ້າຂອງກຸ່ມຕົນ.

- ຄູ ແລະນັກຮຽນກຸ່ມອື່ນພ້ອມກັນຕິດຕາມຟັງ. ຫຼັງຈາກນັ້ນ ກໍປະກອບຄຳເຫັນຕື່ມຖ້າເຫັນວ່າການສະເໜີຂອງຜູ້ຕາງໜ້າກຸ່ມນັ້ນຍັງບໍ່ທັນຄົບຖ້ວນ.

- ຄູ ແລະ ນັກຮຽນພ້ອມກັນສະຫຼຸບກິດຈະກຳທີ່ໄດ້ປະຕິບັດຜ່ານມາ ແລ້ວຄູອະທິບາຍໃຫ້ນັກຮຽນຕື່ມໃນແຕ່ລະຄຳຖາມທີ່ໄດ້ຄົ້ນຄວ້ານັ້ນ.

## V. ການວັດ ແລະ ປະເມີນຜົນ

ປະເມີນຄວາມຮູ້, ຄວາມເຂົ້າໃຈ ແລະ ຄວາມສາມາດຂອງນັກຮຽນຈາກການສັງເກດ:

- ການຕອບຄຳຖາມຂອງນັກຮຽນແຕ່ລະຄົນ ໃນເວລາທີ່ຄູສົນທະນາກັບນັກຮຽນກ່ຽວກັບຮູບພາບແຕ່ລະຮູບ.
- ການສົນທະນາຂອງນັກຮຽນເປັນກຸ່ມ.
- ຄວາມສາມັກຄີກັນໃນເວລາທີ່ນັກຮຽນຄົ້ນຄວ້າເປັນກຸ່ມ.
- ການລາຍງານຂອງຜູ້ຕາງໜ້າແຕ່ລະກຸ່ມ

EUROPEAN COMMISSION

Humanitarian Aid

ປຶ້ມຄູ່ມືຄູໄພພິບັດສຶກສາໄດ້ພັດທະນາຂຶ້ນມາໂດຍກະຊວງສຶກສາທິການ ເຊິ່ງມີການຮ່ວມມືກັບຫ້ອງການຄຸ້ມຄອງໄພພິບັດແຫ່ງຊາດ (NDMO), ສູນກຽມພ້ອມຕ້ານໄພພິບັດແຫ່ງອາຊີ (ADPC) ແລະ ອົງການ ສະຫະປະຊາຊາດ ເພື່ອການພັດທະນາແຫ່ງ (UNDP), ໂດຍການອຸປະຖຳຈາກອົງການມະນຸດສະທຳເອີຣົບ (ECHO).

This teacher guide was developed by the Ministry of Education (MOE) in partnership with the National Disaster Management Office (NDMO), the Asian Disaster Preparedness Center (ADPC) and the United Nations Development Programme ( UNDP) with the support of the European Commission Humanitarian Aid department (ECHO).